# ການສໍາມະນາທາງດ້ານວິຊາການ ກ່ຽວກັບ: "ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ"




ໃນວັນທີ 15 ທັນວາ 2022 ທີ່ທະນາຄານແຫ່ງ ສປປ ລາວ, ຄະນະຊາວໜຸ່ມຮາກຖານ ທຫລ ໄດ້ຈັດກອງປະຊຸມສໍາມະນາວິຊາການຂຶ້ນໃນຫົວຂໍ້ **"ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ"** ໂດຍການເປັນປະທານຂອງສະຫາຍ ສຸລິສັກ ທໍານຸວົງ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ, ຫົວໜ້າກົມຄຸ້ມຄອງລະບົບຊໍາລະສະສາງ ທຫລ, ມີຜູ້ເຂົ້າຮ່ວມຕາງໜ້າຈາກຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ, ຄະນະສະຫະພັນກໍາມະບານຮາກຖານ ທຫລ, ຕາງໜ້າຈາກຄະນະສະຫະພັນແມ່ຍິງຮາກຖານ ທຫລ ແລະ ສະມາຊິກສາມອົງການຈັດຕັ້ງມະຫາຊົນຈາກບັນດາກົມພາຍໃນ ທຫລ ເຂົ້າຮ່ວມ.

ການເຄື່ອນໄຫວຂະບວນວຽກງານວິຊາສະເພາະຄັ້ງນີ້, ເພື່ອເປັນການປະຕິບັດຕາມແຜນດໍາເນີນງານ ຂອງຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ ແລະ ເພື່ອຊົມເຊີຍວັນຊາດ ທີ 02 ທັນວາ ຄົບຮອບ 74 ປີ. ສະນັ້ນ, ເພື່ອເປັນການສ້າງເວທີໃນການແລກປ່ຽນທັດສະນະດ້ານວິຊາການ ແລະ ເປັນຊ່ອງທາງໃນການຫັນເປັນວິຊາການຂອງພະນັກງານ ທຫລ ພ້ອມທັງເປັນການຮອງຮັບຕໍ່ການຂະຫຍາຍຕົວຂອງວຽກງານໃນຕໍ່ໜ້າ ທີ່ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ສະຫຼັບຊັບຊ້ອນ ສົມທົບກັບສະພາບການພັດທະນາຂອງຂະແໜງການເງິນ-ການທະນາຄານໃນພາກພື້ນ ແລະ ສາກົນທີ່ມີການປ່ຽນແປງ ຈຶ່ງມີຄວາມຈໍາເປັນໃນການຮຽນຮູ້ວຽກງານກ່ຽວຂ້ອງຢ່າງກວ້າງຂວາງ ທັງນີ້ກໍ່ເພື່ອຕອບສະໜອງ ແລະ ໝູນໃຊ້ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າວຽກງານທີ່ຕິດພັນໃນແຕ່ລະໄລຍະ. ມື້ນີ້ຖືເປັນໂອກາດດີທີ່ພວກເຮົາຈະໄດ້ແລກປ່ຽນໃນ 3 ຫົວຂໍ້ຄື: **ການຕິດຕາມປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ຂະແໜງການທະນາຄານ; ການ**

**ຄົ້ນຄວ້າຄໍາຮ້ອງ, ຄໍາສະເໜີ ຂອງພົນລະເມືອງ, ພະນັກງານ, ສະມາຊິກພັກ ແລະ ອົງການຈັດຕັ້ງ; ການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ ທຫລ.**

ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຂະແໜງການທະນາຄານກໍ່ເພື່ອບໍ່ໃຫ້ຊັບສິນອັນລວມ ຖືກເສຍຫາຍ, ຖືກຍັກຍອກ ແລະ ສໍ້ໂກງ, ແນ່ໃສ່ເຮັດໃຫ້ກົງຈັກການຈັດຕັ້ງ ແລະ ຖັນແຖວສະມາຊິກພັກ-ພະນັກງານ ມີຄວາມໂປ່ງໃສ, ເຂັ້ມແຂງ ແລະ ສາມາດກວດກາໄດ້. ທຸກຄົນມີພັນທະປະກອບສ່ວນເຂົ້າໃນການເຄື່ອນໄຫວສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງດ້ວຍການຮ່ວມມື, ອໍານວຍຄວາມສະດວກ, ສະໜອງຂໍ້ມູນຫຼັກຖານໃຫ້ແກ່ພາກສ່ວນທີ່ມີສິດ ແລະ ໜ້າທີ່ ກ່ຽວຂ້ອງຢ່າງທັນການ. ພະນັກງານທຸກຂັ້ນ ເປັນຕົ້ນພະນັກງານນໍາພາຂັ້ນຕ່າງໆ ຕ້ອງເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ, ດໍາລົງຊີວິດຢ່າງປອດໃສຂາວສະອາດ, ບໍ່ສໍ້ລາດບັງຫຼວງ.

ພ້ອມດຽວກັນນັ້ນວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ພາຍໃນຂະແໜງການທະນາຄານຂອງພວກເຮົາ ໃນຕໍ່ໜ້າກໍ່ເປັນຂົດໝາຍສໍາຄັນໜຶ່ງໃນການ ຈັດຕັ້ງປະຕິບັດ ໃຫ້ໄປຕາມການກໍານົດຫຼັກການ, ລະບຽບການ, ມາດຕະການ ແລະ ມີປະສິດທິພາບ ເພື່ອຕີຖອຍປະກົດການຫຍໍ້ທໍ້ ໃຫ້ຫຼຸດໜ້ອຍຖອຍລົງ ເທື່ອລະກ້າວ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ຍຸດຕິທໍາ.

**ຂ່າວ-ພາບ: ທ ສົມພິດ ທໍາມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*